

# ສິ່ງທີ່ສື່ເຖິງການທາລຸນທາງເພດເດັກ ຫຼື ສິ່ງລາມົກອານາຈານເດັກ

ນິຍາມ

## ສິ່ງທີ່ສື່ເຖິງການທາລຸນທາງເພດເດັກ

ສິ່ງທີ່ສື່ເຖິງການທາລຸນທາງເພດເດັກ, ຫຼື ເອີ້ນວ່າສິ່ງລາມົກອານາຈານເດັກ, ໝາຍເຖິງທຸກການສະແດງທີ່ເດັກມີສ່ວນພົວພັນໃນກິດຈະກຳທາງເພດຕົວຈິງ ຫຼື ທຳທ່າຈຳລອງກິດຈະກຳທາງເພດ ຫຼື ການສະແດງສ່ວນສະຫງວນຂອງຮ່າງກາຍເດັກເພື່ອຈຸດປະສົງທາງເພດເປັນຫຼັກ.

[ນິຍາມຕາມທີ່ນຳໃຊ້ໃນອະນຸສັນຍາເພີ້ມເຕີມຂອງສົນທິສັນຍາວ່າດ້ວຍສິດທິເດັກ ກ່ຽວກັບ ການຄ້າເດັກ, ການຄ້າປະເວນີເດັກ ແລະ ສິ່ງລາມົກອານາຈານທີ່ກ່ຽວກັບເດັກ (CRC OPSC)].

ສິ່ງທີ່ສື່ເຖິງການທາລຸນທາງເພດສະແດງຮູບພາບເດັກ ທຸກຊ່ຳອາຍຸ ແລະ ທຸກເພດທັງຍິງ ແລະ ຊາຍ ແລະ ຕ່າງແຕ່ລະດັບຄວາມຮ້າຍແຮງຂອງການທາລຸນ ເລີ່ມຕັ້ງແຕ່ການໃຫ້ເດັກຖ່າຍຮູບພາບລາມົກອະນາຈານ ໄປຈົນເຖິງການທຳຮ້າຍຮ່າງກາຍຢ່າງຫຍາບຊ້າ.

## ສິ່ງທີ່ສື່ເຖິງການທາລຸນທາງເພດເດັກທີ່ມີຮູບ ແລະ ສຽງຂອງຄອມພິວເຕີຄືກັບຕົວຈິງແທ້ໆ

ສິ່ງທີ່ສື່ເຖິງການທາລຸນທາງເພດເດັກ ຫຼື ສິ່ງລາມົກອະນາຈານເດັກທີ່ມີຮູບ ແລະ ສຽງຂອງຄອມພິວເຕີຄືກັບຕົວຈິງແທ້ໆໝາຍເຖິງສິ່ງທີ່ບໍ່ໄດ້ສະແດງໃຫ້ເຫັນເຖິງເດັກຕົວຈິງ, ແຕ່ນຳໃຊ້ຮູບພາບກຣາຟຟິກຂອງເດັກທີ່ຮ່ວມເພດຫຼືການທາລຸນທາງເພດເດັກ ແລະ ປະກອບດ້ວຍພາບກາຕູນ, ຮູບພາບທີ່ສ້າງຂຶ້ນໂດຍຄອມພິວເຕີ, ຮູບພາບທີ່ຕັດແຕ່ງໂດຍໂປຣແກຣມຄອມພິວເຕີ.

ເຖິງແມ່ນວ່າສິ່ງລາມົກອະນາຈານເດັກທີ່ມີຮູບ ແລະ ສຽງຂອງຄອມພິວເຕີຄືກັບຕົວຈິງແທ້ໆບໍ່ໄດ້ສ້າງຄວາມເສຍຫາຍແກ່ເດັກຕົວຈິງ, ແຕ່ສິ່ງດັ່ງກ່າວກໍ່ສາມາດເປັນອັນຕະລາຍໄດ້ເນື່ອງຈາກວ່າ (i) ອາດຈະຖືກນຳໃຊ້ເຂົ້າໃນການຊັກຊວນເດັກເພື່ອເປົ້າໝາຍຂູດຮີດເດັກ; (ii) ສິ່ງດັ່ງກ່າວເຮັດໃຫ້ຕະຫຼາດຮູບພາບສື່ເຖິງການທາລຸນທາງເພດເດັກຍັງຄົງຈະມີຢູ່ຕໍ່ໄປ; ແລະ (iii) ກໍ່ໃຫ້ເກີດວັດທະນະທຳຄວາມອົດທົນອົດກັ້ນຕໍ່ການລ່ວງລະເມີດທາງເພດເດັກ ແລະ ປູກຝັງໃຫ້ມີຄວາມຕ້ອງການດັ່ງກ່າວ.



## ຂອບກົດໝາຍ

**ການກະທຳທີ່ຜິດກົດໝາຍ:**

- ການເຂົ້າເຖິງ ຫຼື ການຈັດຫາໃຫ້;
- ການຄອບຄອງເພື່ອນຳໃຊ້ສ່ວນຕົວ (ຕົວຢ່າງ: ບໍ່ແມ່ນສຳລັບແຈກຢາຍ ແລະ ອື່ນໆ) ແມ່ນຖືວ່າເປັນ 'ການຄອບຄອງທົ່ວໄປ';
- ແບ່ງປັນ ຫຼື ແຈກຢາຍ;
- ການຂາຍ;

**ຜະລິດສິ່ງທີ່ສື່ເຖິງການທາລຸນທາງເພດເດັກ.**:

<u>CRC-OPSC:</u> ບໍ່ລວມການເຂົ້າເຖິງສິ່ງທີ່ສື່ເຖິງການທາລຸນທາງເພດເດັກ, ການຄອບຄອງທົ່ວໄປ ແລະ ສິ່ງທີ່ສື່ເຖິງການທາລຸນທາງເພດເດັກທີ່ມີຮູບ ແລະ ສຽງຂອງຄອມພິວເຕີກັບຂອງຈິງແທ້ໆ

<u>ສົນທິສັນຍາບູດາເປສ໌:</u> ກວມເອົາການກຳນົດໂທດທາງອາຍາຕໍ່ສິ່ງທີ່ສື່ເຖິງການທາລຸນທາງເພດເດັກທີ່ມີຮູບ ແລະ ສຽງຂອງຄອມພິວເຕີຄືກັບຂອງຈິງແທ້ໆ

<u>ສົນທິສັນຍາລານຊາໂຣ໋ທ໌:</u> ກວມເອົາການກຳນົດໂທດທາງອາຍາຕໍ່ສິ່ງທີ່ສື່ເຖິງການທາລຸນທາງເພດເດັກທີ່ມີຮູບ ແລະ ສຽງຂອງຄອມພິວເຕີຄືກັບຂອງຈິງແທ້ໆ

<u>ສົນທິສັນຍາ ILO 182:</u> ກວມເອົາພຽງແຕ່ການຜະລິດສິ່ງທີ່ສື່ເຖິງການທາລຸນທາງເພດເດັກເທົ່ານັ້ນ

<u>ສົນທິສັນຍາສະຫະພາບອາຟຣິກາວ່າດ້ວຍອາດຊະຍາກຳທາງຄອມພິວເຕີ:</u> ກວມເອົາການກຳນົດໂທດທາງອາຍາຕໍ່ສິ່ງທີ່ສື່ເຖິງການທາລຸນທາງເພດເດັກທີ່ມີຮູບ ແລະ ສຽງຂອງຄອມພິວເຕີຄືກັບຂອງຈິງແທ້ໆ [ຍັງບໍ່ມີຜົນບັງຄັບໃຊ້]

## ຜູ້ລະເມີດ ແລະ ວິທີດຳເນີນການຂອງພວກເຂົາ

- ຜູ້ລະເມີດໄດ້ຮັບແຮງຈູງໃຈຫຼັກໆຈາກ**ຄວາມສົນໃຈທາງເພດ**ເດັກ ຫຼື **ຈາກຜົນໄດ້ຮັບທາງການເງິນ;**
- ຜູ້ລະເມີດດຳເນີນການ**ພຽງຜູ້ດຽວ** ຫຼື ເປັນສ່ວນໜຶ່ງຂອງ**ເຄືອຂ່າຍ;**
- ຜູ້ລະເມີດນຳໃຊ້ອຸປະກອນ, **ຊອບແວຣ໌ຫຼາຍຮູບແບບ** ແລະ/ຫຼື **ອິນເຕີເນັດ**ໃນການສ້າງ, ເຂົ້າເຖິງ ຫຼື ແບ່ງປັນສິ່ງທີ່ສື່ເຖິງການທາລຸນທາງເພດເດັກ;
- ບາງຄັ້ງຄາວ ຜູ້ລະເມີດຈະນຳໃຊ້ວິທີການ**ເຂົ້າລະຫັດ** ແລະ ນຳໃຊ້ໂປຣແກຣມໃນອິນເຕີເນັດເພື່ອປົກປິດການກະທຳຂອງພວກເຂົາ ແລະ ຫຼີກລ້ຽງການກວດສອບ;
- ສິ່ງທີ່ສື່ເຖິງການທາລຸນທາງເພດເດັກທີ່ປະກອບດ້ວຍສິ່ງທີ່ສື່ເຖິງການທາລຸນທາງເພດເດັກຢ່າງແທ້ຈິງແມ່ນນຳໃຊ້ໂດຍຜູ້ລະເມີດໃນການ**ຊັກຊວນ ຫຼື ດຶງດູດ**ເດັກເພື່ອເຂົ້າຮ່ວມໃນກິດຈະກຳທາງເພດ.

** ກະລຸນາເບິ່ງເອກະສານໃຫ້ຂໍ້ມູນກ່ຽວກັບເຕັກໂນໂລຊີ ແລະ ອິນເຕີເນັດ*

## ທ່ານສາມາດເຮັດຫຍັງໄດ້ແນ່?

- ສົ່ງເສີມໃຫ້ມີຂອບກົດໝາຍທີ່ເຂັ້ມແຂງຂຶ້ນ ທີ່ກຳນົດວ່າທຸກການກະທຳທີ່ກ່ຽວຂ້ອງກັບສິ່ງທີ່ສື່ເຖິງການທາລຸນ ທາງເພດເດັກ ລວມທັງສິ່ງທີ່ສື່ເຖິງການທາລຸນທາງເພດເດັກຢ່າງແທ້ຈິງເປັນການກະທຳຜິດທາງອາຍາ;
- ສົ່ງເສີມໃຫ້ມີແຫຼ່ງຊັບພະຍາກອນທີ່ດີຂຶ້ນສຳລັບໜ່ວຍງານບັງຄັບໃຊ້ກົດໝາຍ, ເປັນຕົ້ນແມ່ນຄວາມອາດສາມາດ ແລະ ເຄື່ອງມືສະເພາະ ເພື່ອຮັບມືກັບສິ່ງທີ່ສື່ເຖິງການທາລຸນທາງເພດເດັກ ແລະ ລະບຸຕົວຕົນຜູ້ຖືກເຄາະຮ້າຍ;
- ສົ່ງເສີມ ແລະ ຮ່ວມມືກັບພາກເອກະຊົນ ເປັນຕົ້ນແມ່ນຜູ້ໃຫ້ບໍລິການອິນເຕີເນັດ ໃນການຈັດຕັ້ງປະຕິບັດນະໂຍບາຍຂັດຂວາງການຈະລາຈອນຂອງສິ່ງທີ່ສື່ເຖິງການທາລຸນທາງເພດເດັກ;
- ອົບຮົມ ແລະ ປູກຈິດສຳນຶກກ່ຽວກັບສິ່ງທີ່ສື່ເຖິງການທາລຸນທາງເພດເດັກ ລວມທັງຄວາມສ່ຽງ ແລະ ການກະທຳທີ່ປອດໄພໃນອິນເຕີເນັດ;
- ດຳເນີນການຄົ້ນຄວ້າ ແລະ ເກັບກຳຂໍ້ມູນທີ່ກ່ຽວຂ້ອງເພື່ອຍົກລະດັບຄວາມເຂົ້າໃຈກ່ຽວກັບຂອບເຂດ ແລະ ລັກສະນະຂອງສິ່ງທີ່ລ່ວງລະເມີດທາງເພດເດັກ;
- ລາຍງານເມື່ອພົບເຫັນສິ່ງທີ່ສື່ເຖິງການທາລຸນທາງເພດເດັກໃນອິນເຕີເນັດ;
- ສະໜັບສະໜູນ ແລະ ເບິ່ງແຍງຜູ້ຖືກເຄາະຮ້າຍຈາກສິ່ງທີ່ສື່ເຖິງການທາລຸນທາງເພດເດັກ.

ເອກະສານຂໍ້ມູນຕົວຈິງທີ່ຊີ້ໃຫ້ເຫັນກ່ຽວກັບການຂູດຮີດທາງເພດເດັກທາງອິນເຕີເນັດ ສະບັບນີ້ໄດ້ຮັບການພັດທະນາໂດຍອົງການ ECPAT ສາກົນ.
ສະໜັບສະໜູນການແປພາສາ ແລະ ການຜະລິດໂດຍອົງການສປຊ ສຳລັບເດັກ

ECPAT
unicef unite for children